# San Diego Unified School District

EUGENE BRUCKER EDUCATION CENTER
4100 Normal Street, San Diego, CA 92103-2682

(619) 725-5506

Carl A. Cohn
Superintendent of Schools


ເດືອນທັນວາ **2007**

ເຖິງພໍ່ແມ່ ແລະ ຜູ່ປົກຄອງນັກຮຽນ,

ຂໍຂອບໃຈທ່ານ, ທີ່ສົກຮຽນປີ **2007** ເປັນປີດີທີ່ສຸດ ສຳຫລັບພວກນັກຮຽນສູນກາງສຶກສາແຂວນດີເອໂກ. ຫລັງຈາກໄຟໄຫມ້ປ່າ ແລະ ໂຮງຮຽນຕ້ອງໄດ້ປິດລົງນັ້ນ, ຂ້າພະເຈົ້າ ຂໍຮັບຮູ້ບຸນຄຸນທຸກໆທ່ານທີ່ຊ່ອຍເຫລືອໃຫ້ຄວາມປອດພັຍແກ່ພວກເດັກ ແລະ ໃຫ້ການສຶກສາຮ່ຳຮຽນແກ່ເຂົາເຈົ້າ. ຂ້າພະເຈົ້າໄດ້ຮັບກຳລັງໃຈປະຈຳວັນ ຈາກການເອົາໃຈໃສ່ອຸທິດຈິດໃຈຂອງພະນັກງານໂຮງຮຽນ, ການທຸ້ມເທເພື່ອແຮງຂອງຄອບຄົວ ແລະ ການມີນ້ຳໃຈຊ່ອຍເຫລືອຂອງຊຸມຊົນ ທີ່ພາກັນຖືເອົາພວກນັກຮຽນເປັນລະດັບນຶ່ງຕລອດມາ, ເຖິງວ່າໂຮງຮຽນຂອງພວກເຮົາຈະປະເຊີນກັບເຫດການໃດໆກໍ່ຕາມ.

ທາມກາງຄວາມລຳບາກຍາກໃຈ ເລື້ອງໃຊ້ຫນີ້ເງິນຄ່າເຮືອນ ແລະ ການເສຖກິດຕົກຕ່ຳນັ້ນ, ເມື່ອມໍ່ໆມານີ້ ເຈົ້າຣັຖຄາລີຟໍເນັຍທ່ານ **Schwarzenegger** ໄດ້ປະກາດວ່າ ເງິນງົບປະມານຂອງສົກປີ **2008** ນີ້ອາດຈະຖືກຕັດນ້ອຍລົງ. ພວກເຮົາຢາກຮູ້ແນ່ນອນວ່າ ນັກຮຽນຂອງພວກເຮົາຢູ່ແຂວນດີເອໂກນີ້ຈະໄດ້ຮັບເງິນງົບປະມານການສຶກສາຂັ້ນຈຳເປັນຮີບດ່ວນຫລາຍເທົ່າໃດ — ພິເສດກໍ່ຄື ໂຮງຮຽນຂອງພວກເຮົາໄດ້ຖືກລົບກວນກ່ຽວກັບໄຟໄຫມ້ນັ້ນ. ທີ່ທ່ານກໍອາດຈະຮູ້ຢູ່ແລ້ວວ່າ, ຣັຖຄາລີຟໍເນັຍຈ່າຍສຳຫລັບນັກຮຽນຄົນນຶ່ງນັ້ນ ນ້ອຍກວ່າເຂດໂຮງຮຽນໃຫຍ່ໆສ່ວນຫລາຍ ໃນຣັຖຕ່າງໆທີ່ຄ້າຍຄືກັບພວກເຮົາ, ນີ້ບໍ່ຫມາຍຄວາມວ່າ ນັກຮຽນຂອງພວກເຮົາຈະໄດ້ຮັບຜົນປະໂຍດນ້ອຍກວ່ານັກຮຽນໃນຣັຖອື່ນໆ. ເພາະສະນັ້ນ ພວກເຮົາຕ້ອງໄດ້ທຳການຊ່ອຍເຫລືອນັກຮຽນຂອງພວກເຮົາຢ່າງເຂັ້ມແຂງທີ່ສຸດ.

ດັ່ງທີ່ທ່ານຮູ້ແລ້ວນັ້ນ, ຂ້າພະເຈົ້າມີແຜນຈະອອກບຳນານໃນໄວໆນີ້. ອັນເປັນປະສົບການທີ່ມີກຽດທີ່ສຸດຂອງຂ້າເຈົ້າ ທີ່ໄດ້ຮັບໃຊ້ທ່ານ ແລະ ເດັກຂອງທ່ານ. ຂ້າພະເຈົ້າຖືວ່າໄດ້ຮັບສິດພິເສດທີ່ໄດ້ເຮັດວຽກກັບສູນກາງສຶກສາທີ່ມີລະບົບຄວາມສາມາດພຽງພໍ ທີ່ຈະກ້າວຂຶ້ນເປັນສູນກາງສຶກສາທີ່ດີເລີດຂອງສະຫະຣັຖອະເມຣິກາ. ໃນລະຍະສອງປີຜ່ານມານັ້ນ—ຍ້ອນການຊ່ອຍເຫລືອຂອງທ່ານ—ຂອງບັນດາຄຣູ ແລະ ພະງານໂຮງຮຽນ ພວກເຮົາໄດ້ສ້າງຄວາມກ້າວຫນ້າອັນສຳຄັນເຂົ້າສູ່ເປົ້າຫມາຍ. ພວກເຮົາຮູ້ວ່ານັກຮຽນທຸກໆຄົນມີຄວາມສາມາດສຶກສາຮ່ຳຮຽນໄດ້ດີ. ໂຮງຮຽນຫລວງຂອງພວກເຮົາມີຄວາມຕັ້ງໃຈແນວແນ່ ຈະຖືສັດຈະໄວ້, ແລະ ບັນດາພໍ່ແມ່ ແລະນັກຮຽນທັງຫລາຍຮູ້ດີວ່າ ໂຮງຮຽນຂອງພວກເຮົາກຳລັງມີຄວາມກ້າວຫນ້າຂຶ້ນໄປເລື້ອຍໆ.

ບໍ່ມີສິ່ງໃດສຳຄັນກວ່າການສຶກສາ ແລະ ອະນາຄົດຂອງນັກຮຽນ ແລະ ຄອບຄົວທີ່ພວກເຮົາຊ່ວຍເຫລືອບໍຣິການ. ການສຶກສາຮ່ຳຮຽນນີ້ມີຄວາມສຳຄັນຫລາຍ. ມັນສ້າງຄວາມປ່ຽນແປງໃນຊີວິດ. ມັນເປີດໂອກາດໃຫ້. ສິ່ງເຫລົ່ານີ້ ຄືສິ່ງທີ່ພວກເຮົາໄດ້ໃຫ້ແກ່ນັກຮຽນໃນເວລານີ້, ການສຶກສາເປັນຂອງຂວັນອັນລ້ຳຄ່າທີ່ພວກເຮົາສາມາດເອົາໃຫ້ແກ່ລູກຫລານຂອງພວກເຮົາຊຶ່ງບໍ່ມີໃຜຍາດແຍງເອົາໄປໄດ້.

ດ້ວຍຄວາມນັບຖືຢ່າງສູງ,

Carl A. Cohn
Superintendent of Schools

ຂໍເພີ້ມທ້າຍ: ຖ້າທ່ານອອກເລາະຮ້ານຄ້າ ແລະ ບໍ່ແນ່ໃຈວ່າຈະຊື້ຫຍັງໃຫ້ເດັກນັ້ນ, ຈຳໄວ້ວ່າ ປື້ມອ່ານດີໆນັ້ນ ເປັນຂອງຂວັນພິເສດສຳຫລັບເດັກຢູ່ຕລອດເວລາ.